ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 578 /ຈນວ

ລົງວັນທີ: 8.9.2020

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຂອບເຂດ ແລະ ປະເມີນຫົວໜ່ວຍລາຄາຜົນລະປູກ, ສິ່ງກໍ່ສ້າງ, ເນື້ອທີ່ດິນ ທີ່ຖືກກັບແລວທາງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19 ແລະ 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 128/ຄປຈ, ລົງວັນທີ 04 ກັນຍາ 2018 ວ່າດ້ວຍການຮັບຮອງເອົາໂຄງການກໍ່ສ້າງສາຍສົ່ງໄຟຟ້າ 5 ໂຄງການ;
- ອີງຕາມ ມາດຕາ 153 ແລະ 154 ຂອງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ;
- ອີງຕາມ ມາດຕາ 26 ຂອງກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 09 ມີນາ 2017;
- ອີງຕາມ ມະຕິກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ຄັ້ງທີ 32, ໃນວັນທີ 26 ພຶດສະພາ 2020 ສະບັບເລກທີ 05/ອປຄ.ນວ, ລົງວັນທີ 2 ມິຖຸນາ 2020;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ຊຸດທີ I ເທື່ອທີ 9 ຄັ້ງວັນທີ 15-17 ກໍລະກົດ 2020 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

ມາດຕາ 1 ຈຸດປະສົງ

ຮັບຮອງເອົາການກຳນົດລະບຽບ, ຫຼັກການການທົດແທນໃຫ້ແກ່ຜູ້ທີ່ມີສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ການພັດທະນາອື່ນໆ ທີ່ຢູ່ໃນເຂດສະຫງວນຂອງໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ເພື່ອເປັນການປຸກລະດົມປະຊາຊົນທີ່ຖືກກັບແລວທາງການກໍ່ສ້າງໂຄງການດັ່ງກ່າວ ໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍການພັດທະນາຂອງລັດຖະບານ, ແນໃສ່ຮັບປະກັນໃຫ້ຜູ້ທີ່ມີສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ການພັດທະນາອື່ນໆ ໄດ້ຮັບການທົດແທນທີ່ເໝາະສົມ, ການຈັດສັນຍົກຍ້າຍ, ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ ສອດຄ່ອງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍ

ຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ ໄດ້ກຳນົດໄວ້ ແລະ ເປັນພື້ນຖານໃນການຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ວາງຫົວໜ່ວຍລາຄາທົດແທນຕາມຜົນກະທົບທີ່ເກີດຂຶ້ນຕົວຈິງ.

**ມາດຕາ 2 ເປົ້າໝາຍຂອງໂຄງການ**

ໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ, ໂຄງການດັ່ງກ່າວແມ່ນໂຄງການຂອງລັດຖະບານລາວ ໂດຍມອບໃຫ້ລັດວິສາຫະກິດໄຟຟ້າລາວ ເປັນຜູ້ດຳເນີນການກໍ່ສ້າງ ແລະ ຄຸ້ມຄອງໂດຍພາຍໃຕ້ການຊີ້ນຳຂອງກະຊວງພະລັງງານ ແລະ ບໍ່ແຮ່, ຈຸດປະສົງຫຼັກຂອງໂຄງການແມ່ນລຳລຽງໄຟຟ້າຈາກບັນດາເຂື່ອນພາກເໜືອ ເພື່ອສະໜອງໄຟຟ້າໃຫ້ພຽງພໍເຂົ້າໃນການຊົມໃຊ້ພາຍໃນນະຄອນຫຼວງວຽງຈັນ ແລະ ສ່ວນທີ່ເຫຼືອແມ່ນສົ່ງຂາຍໃຫ້ແກ່ປະເທດເພື່ອນບ້ານ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບການຈັດຕັ້ງຂອງພັກ-ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອທົດແທນໃຫ້ແກ່ຜູ້ທີ່ມີສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ການພັດທະນາອື່ນໆ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ, ເຊິ່ງມີຄວາມຍາວທັງໝົດ 37,5 ກິໂລແມັດ, ມີຄວາມກວ້າງຂອງແລວສາຍສົ່ງໄຟຟ້າ 35 ແມັດ ກວມເອົາ 4 ເມືອງຄື: ເມືອງປາກງື່ມ, ເມືອງໄຊທານີ, ເມືອງໄຊເສດຖາ ແລະ ເມືອງຫາດຊາຍຟອງ ຜ່ານ 15 ບ້ານ.

**ມາດຕາ 4 ຫຼັກການທົດແທນຄ່າເສຍຫາຍ ແລະ ເຂດສະຫງວນ**

4.1. ການກຳນົດຫຼັກການວິທີຄິດໄລ່ຫົວໜ່ວຍລາຄາທົດແທນໃຫ້ແກ່ຜູ້ທີ່ມີສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ທີ່ຖືກເຂດສະຫງວນ ຢູ່ແຕ່ລະບ້ານ ແມ່ນເອົາຂໍ້ມູນການຊື້-ຂາຍທີ່ດິນຕົວຈິງ ຂອງແຕ່ລະເຂດມາສະເລ່ຍກັບລາຄາປະເມີນທີ່ດິນ ຕາມຂໍ້ຕົກລົງສະບັບເລກທີ 352/ສນຍ.ອຄດຊ, ລົງວັນທີ 31 ພຶດສະພາ 2011 ທີ່ໃຊ້ສຳລັບການຈົດທະບຽນມອບ-ໂອນ ສິດນຳໃຊ້ທີ່ດິນປະຈຸບັນເປັນລາຄາທົດແທນ;

4.2. ເຂດສະຫງວນໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານນີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ມີຄວາມຍາວ 37,5 ກິໂລແມັດ, ມີຄວາມກວ້າງຂອງແລວສາຍສົ່ງໄຟຟ້າ 35 ແມັດ, ເນື້ອທີ່ດິນທີ່ຖືກເຂດສະຫງວນແລວທາງການກໍ່ສ້າງທັງໝົດ 85 ເຮັກຕາ 6.998 ຕາແມັດ, ມີເສົາທັງໝົດ 92 ຕົ້ນ, ເນື້ອທີ່ດິນທີ່ຖືກເຂດສະຫງວນຕີນເສົາ 19.937 ຕາແມັດ, ມີຕອນດິນທີ່ຖືກເຂດສະຫງວນທັງໝົດ ຈຳນວນ 350 ຕອນດິນ, ກວມເອົາ 4 ເມືອງຄື: ເມືອງປາກງື່ມ, ເມືອງໄຊທານີ, ເມືອງໄຊເສດຖາ ແລະ ເມືອງຫາດຊາຍຟອງ ຜ່ານ 15 ບ້ານ;

4.3. ໂຄງການຈະເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການດັດແກ້ ແລະ ອອກໃບຕາດິນໃໝ່ໃຫ້ຜູ້ທີ່ມີສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ໃນສ່ວນທີ່ເຫຼືອຈາກການຕັ້ງຕີນເສົາໄຟຟ້າ, ທີ່ດິນທີ່ຍັງເຫຼືອໜ້ອຍ ຫຼື ຫຼາຍຍັງເປັນສິດໃຊ້, ສິດນຳໃຊ້ທີ່ດິນຖືກຕ້ອງຕາມກົດໝາຍຂອງເຈົ້າຂອງທີ່ດິນ;

4.4. ປະເພດສິ່ງປຸກສ້າງ, ຕົ້ນໄມ້ກະສິກຳ, ຕົ້ນໄມ້ອຸດສາຫະກຳ ແລະ ຜົນລະປູກອື່ນໆ ທີ່ໄດ້ຮັບການທົດແທນສຳເລັດແລ້ວ ເຈົ້າຂອງກຳມະສິດສາມາດຍົກຍ້າຍສິ່ງປຸກສ້າງ ແລະ ຕັດໄມ້ໄປນຳໃຊ້ໄດ້ ແລະ ຕ້ອງປະຕິບັດໃຫ້ທັນຕາມໄລຍະເວລາທີ່ໂຄງການກຳນົດໄວ້, ຖ້າເຈົ້າຂອງກຳມະສິດບໍ່ສາມາດຍົກຍ້າຍຕາມກຳນົດເວລາທາງໂຄງການຈະຊ່ວຍຍົກຍ້າຍຕາມຄວາມເປັນຈິງ;

4.5. ການທົດແທນໃຫ້ແກ່ຜູ້ທີ່ມີສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ການພັດທະນາອື່ນໆ ໂຄງການຈະຈ່າຍເງິນທົດແທນສະເພາະທີ່ດິນທີ່ຖືກຈຸດຕັ້ງຕີນເສົາ ສຳລັບທີ່ດິນກ້ອງແລວສາຍສົ່ງແມ່ນຈະບໍ່ໄດ້ຮັບການທົດແທນຈາກໂຄງການ ເນື່ອງຈາກວ່າຕອນດິນດັ່ງກ່າວຍັງສາມາດນຳໃຊ້ໄດ້ໃນການຜະລິດປູກພືດ ແລະ ປູກຕົ້ນໄມ້ທີ່ມີຄວາມສູງບໍ່ເກີນ 3 ແມັດ;

4.6. ກໍລະນີຜູ້ທີ່ມີສິດນຳໃຊ້ທີ່ດິນ ມີເອກະສານຢ່າງຖືກຕ້ອງຕາມກົດໝາຍ ໄດ້ສູນເສຍທີ່ດິນທັງໝົດ ຫຼື ສ່ວນໃຫຍ່, ສ່ວນທີ່ດິນທີ່ເຫຼືອບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ຊົດເຊີຍທັງໝົດ ໃນອັດຕາດຽວກັນ ຕາມມູນຄ່າປ່ຽນແທນທີ່ຄິດໄລ່ໄວ້ ສຳລັບການທົດແທນສິດໃຊ້ທີ່ດິນ ຜູ້ທີ່ບໍ່ມີເອກະສານກ່ຽວກັບການນຳໃຊ້ທີ່ດິນຈະບໍ່ໄດ້ຮັບຄ່າທົດແທນຄ່າເສຍຫາຍຕໍ່ການສູນເສຍທີ່ດິນດັ່ງກ່າວ, ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ.

4.7. **ຫົວໜ່ວຍລາຄາທົດແທນສິດໃຊ້, ສິດນຳໃຊ້ທີ່ດິນ**

ຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ຂອບເຂດໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ (ລາຍລະອຽດມີຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ສະບັບເລກທີ 4111/ພຊສ, ລົງວັນທີ 15 ພຶດສະພາ 2020 ຄັດຕິດມາພ້ອມນີ້).

4.8. **ຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ**

ຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ ເຂດໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ (ລາຍລະອຽດມີເອກະສານ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 611/ຍທຂ.ນວ, ລົງວັນທີ 30 ມັງກອນ 2020 ຄັດຕິດມາພ້ອມນີ້).

4.9. **ຫົວໜ່ວຍລາຄາທົດແທນຄ່າເສຍຫາຍພືນລະປູກ**

ຫົວໜ່ວຍລາຄາທົດແທນຄ່າເສຍຫາຍພືນລະປູກ ເຂດໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ (ລາຍລະອຽດມີເອກະສານ ຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ສະບັບເລກທີ 438/ກປ.ນວ, ລົງວັນທີ 31 ມັງກອນ 2020 ຄັດຕິດມາພ້ອມນີ້).

**ມາດຕາ 5 ແຫຼ່ງທຶນໃນການທົດແທນ**

ງົບປະມານໃນການທົດແທນແມ່ນເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບໂດຍນຳໃຊ້ງົບປະມານ ຂອງໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ທີ່ເປັນໂຄງການຂອງລັດຖະບານ.

**ມາດຕາ 6 ສະຖານທີ່ ແລະ ວິທີທົດແທນ**

6.1. ຜູ້ທີ່ມີສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການສາມາດສະເໜີຮັບການທົດແທນໄດ້ ຈາກຄະນະຮັບຜິດຊອບໂຄງການ ຄະນະກຳມະການປະສານງານ ແລະ ຊຸກຍູ້ໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ໃຫ້ແຕ່ລະເມືອງທີ່ຖືກເຂດສະຫງວນແລວທາງການກໍ່ສ້າງໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ເປັນຜູ້ຕິດຕາມ ແລະ ກວດກາການທົດແທນ.

6.2. ພາຍຫຼັງຜູ້ທີ່ມີສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ ໄດ້ຮັບຮອງເອົາມູນຄ່າການທົດແທນສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ແລ້ວ ໂຄງການຈະໄດ້ໂອນເງິນເຂົ້າບັນຊີເງິນຝາກຢູ່ທະນາຄານທີ່ໂຄງການເປີດໃຫ້ສະເພາະ ຫຼື ບັນຊີຂອງຜູ້ທີ່ມີສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ, ເຊິ່ງການໂອນເງິນແຕ່ລະຄັ້ງຕ້ອງຜ່ານການກວດກາຈາກຄະນະກຳມະການທຸກຄັ້ງ ກ່ອນຈະມີການໂອນເງິນ, ທະນາຄານທີ່ໂອນເງິນໃຫ້ແກ່ຜູ້ທີ່ມີສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ ຕ້ອງແມ່ນທະນາຄານ

ທີ່ຢູ່ໃກ້ ຫຼື ທະນາຄານທີ່ເຈົ້າຂອງຊັບສິນມີຄວາມສະດວກທີ່ສຸດ ເພື່ອອໍານວຍຄວາມສະດວກໃນການເຄື່ອນໄຫວທາງດ້ານການເງິນ;

6.3. ການຈ່າຍເງິນທົດແທນ ແມ່ນຈະປະຕິບັດພາຍຫຼັງທີ່ຄະນະກໍາມະການຂັ້ນເມືອງໄດ້ປະເມີນຄ່າຊັບສິນ ແລະ ເປັນເອກະພາບກັບຜູ້ທີ່ມີສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງ ການແລ້ວ ແລະ ໄດ້ຮັບການຮັບຮອງຢ່າງເປັນທາງການ ຈາກຄະນະຮັບຜິດຊອບໂຄງການຕາມຂັ້ນຕອນ, ກໍລະນີຜູ້ທີ່ມີສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ ບໍ່ຍອມຮັບເອົາການທົດແທນໂຄງການ ແມ່ນຈະຕ້ອງສະເໜີໃຫ້ເຈົ້າຂອງຊັບສິນມອບພື້ນທີ່ດິນໃຫ້ໂຄງການປະຕິບັດ, ໂຄງການຕ້ອງໄດ້ໂອນເງິນຄ່າທົດແທນຄ່າເສຍຫາຍເຂົ້າໄວ້ບັນຊີກາງ ຕ້ອງໄດ້ປະຕິບັດການທົດແທນໃຫ້ແກ່ຜູ້ທີ່ມີສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ ໃຫ້ສໍາເລັດກ່ອນການດໍາເນີນການກໍ່ສ້າງ.

**ມາດຕາ 7 ການແກ້ໄຂຂໍ້ຂັດແຍ່ງ**

ໃນກໍລະນີຂໍ້ຂັດແຍ່ງທີ່ເກີດຈາກການບໍ່ຮັບເອົາເງິນຄ່າທົດແທນຕາມມູນຄ່າ ທີ່ຕົກລົງກັນເປັນລາຍລັກອັກສອນ ຫຼື ກໍລະນີອື່ນໆ ທີ່ກ່ຽວຂ້ອງກັບການທົດແທນໃຫ້ແກ່ຜູ້ທີ່ມີສິດໃຊ້, ສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ໃນຂອບເຂດໂຄງການ ຜູ້ທີ່ມີສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ ມີສິດສະເໜີແກ້ໄຂຂໍ້ຂັດແຍ່ງເຖິງຄະນະກໍາມະການຂັ້ນເມືອງ ແລະ ເຈົ້າຂອງໂຄງການເປັນຜູ້ຄົ້ນຄວ້ານໍາສະເໜີແກ້ໄຂ.

**ມາດຕາ 8 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະຮັບຜິດຊອບວຽກທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ມີສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ຂອງລັດວິສາຫະກິດໄຟຟ້າລາວ ແຕ່ສະຖານີນາບົງ ເມືອງປາກງື່ມ ຫາ ສະຖານີດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ, ເຊິ່ງປະກອບມີເມືອງປາກງື່ມ, ເມືອງໄຊທານີ, ເມືອງໄຊເສດຖາ, ເມືອງຫາດຊາຍຟອງ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກການເງິນ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກໍາ ແລະ ປ່າໄມ້, ພະແນກຍຸດຕິທໍາ, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ແລະ ທຸກການຈັດຕັ້ງຂອງພັກ-ລັດ ແລະ ສັງຄົມທີ່ກ່ຽວຂ້ອງ ມີໜ້າທີ່ໂຄສະນາ, ປະຊາສໍາພັນ ແລະ ປຸກລະດົມປະຊາຊົນຜູ້ທີ່ມີສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ ແລະ ການພັດທະນາອື່ນໆ ທີ່ຖືກໂຄງການ ໃຫ້ເຂົ້າໃຈ ແລະ ປະກອບສ່ວນເຂົ້າໃນການພັດທະນາລວມຂອງລັດຖະບານ ທີ່ວາງໄວ້ໃຫ້ມີຄວາມສະຫງົບ ແລະ ໄດ້ຮັບຜົນດີ.

**ມາດຕາ 9** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ເຈົ້າຄອງນະຄອນຫຼວງວຽງຈັນ

ອາດສະພັງທອງ ສີພັນດອນ

<u>ບ່ອນສົ່ງ:</u>

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທ່ານລະ | 01 ສະບັບ; |
| - ຫ້ອງການກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ; |
| - ຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ | 01 ສະບັບ; |
| - ຫ້ອງການ ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ; |
| - ຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່ | 01 ສະບັບ; |
| - ລັດວິສາຫະກິດໄຟຟ້າລາວ | 01 ສະບັບ; |
| - ສະພາປະຊາຊົນ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ພະແນກການທີ່ກ່ຽວຂ້ອງ ພະແນກລະ | 01 ສະບັບ; |
| - ເມືອງທີ່ກ່ຽວຂ້ອງ ເມືອງລະ | 01 ສະບັບ; |
| - ອົງການປົກຄອງບ້ານທີ່ກ່ຽວຂ້ອງ ບ້ານລະ | 01 ສະບັບ; |
| - ເກັບມ້ຽນສໍານາ | 02 ສະບັບ. |